## ຮີດ ໑໒ ແລະ ຄອງ ໑໔

## ກ່າຍຈາກພັບ ຮີດ ໑໒ ຄອງ ໑໔ ຂອງ ກະຊວງທັມມະການ

ຮີດ ມາຈາກຄຳບາລີ ວ່າ ຈາຣິດະ, ລາວເຮົາໃຊ້ວ່າ ຈາຣີດທີ່ມາເຫລືອແຕ່ ຮີດ ຄຳວ່າ ຈາຣິດະ ຫລືວ່າ ຈາຣີດ ຫລື ຮີດ ແປວ່າ ປະເພນີ ທີ່ເຄີຍປະພຶດມາ

ຮີດ ໑໒ ໃນທີ່ນີ້ ໝາຍເອົາປະເພນີການທຳບຸນຕາມເດືອນທັງ ໑໒ ເດືອນ ຫລືປະເພນີ ທີ່ຈະຕ້ອງທຳຕາມເດືອນນັ້ນ ໆ ທີ່ໃບຮານເຄີຍພາທຳມາ ມີດັ່ງນີ້ :

໑ – ເຖິງເດືອນຈຽງມານັ້ນ ໃຫ້ລ້ຽງຜີມີດຜີໝໍ ຜີຟ້າຜີແຖນ ແລະນິມົນພຣະສັງຄະເຈົ້າເຂົ້າປະຣິວາສະກັມ,

໒ – ເຖິງຣະດູເດືອນຍີ່ ໃຫ້ນິມົນພຣະສັງຄະເຈົ້າ ມາຕັ້ງສູດ ໄຊ້ບະນຸງຄຸນເອົາບຸນຄູນເຂົ້າ,

໓ – ເຖິງເດືອນ ໓ ເພັງ ມານັ້ນໃຫ້ທຳທານເອົາບຸນເຂົ້າຈີ່ ແລະບຸນ ມາຄະບູຊາ

໔ – ເຖິງຣະດູເດືອນ ໔ ໃຫ້ຫາດອກໄມ້ມາໄວ້ສັກກາຣະບູຊາ ແລະທຳບຸນຟັງທັມມະເທສນາ ຫລື ບຸນມະຫາເວສັນດາຣະຊາດົກ ເປັນຕົ້ນ,

໕ – ເຖິງຣະດູເດືອນ ໕ ສັງຂານປີໃໝ່ມານັ້ນ ໃຫ້ນິມົນພຣະສັງຄະເຈົ້າ ຕັ້ງສູດໄຊ້ບະນຸງຄຸນ ຮຸ່ງເຊົ້າອັນເປັນມື້ເນົາ ໃຫ້ພາກັນທຳບຸນໃຫ້ທານເຂົ້ານ້ຳໂພຊນາອາຫານແກ່ສັງຄະເຈົ້າບູ່ມີສີນແລ້ວຂໍສົມມາຄາຣະວະພຣະພຸທຮູບເຈົ້າ ພຣະທັມມະເຈົ້າ ພຣະສັງຄະເຈົ້າ ແລະ ພໍ່ແມ່ເຖົ້າແກ່ແລະຜົວແຫ່ງຕົນ; ປະການໜຶ່ງ ໃຫ້ປູກບານໄຊກາງບ້ານ ແລ້ວນິມົນພຣະສັງຄະເຈົ້າມາຕັ້ງສູດໄຊ້ບະນຸງຄຸນຖ້ວນ ໗ ວັນ ໗ ຄືນ ແລະ ໃຫ້ທຳທານຖວາຍເຂົ້ານ້ຳໂພຊນາອາຫານແກ່ສົງແລ້ວພາກັນແຕ່ງເຄື່ອງກິຣິຍາບູຊາເບີກສັງບີບໍຣິສາດ ຄືໃຫ້ປູກຮ້ານໄວ້ ໔ ແຈບ້ານ ແລ້ວນິມົນພຣະສັງຄະເຈົ້າສູດພຍາ ທັງ ໔ ໃສ່ໃນຮ້ານນັ້ນແລະມີຟ້າຍພູມມະຈາຣີປັງໄວ້ອ້ອມບ້ານ ຄັນເຖິງວັນຖ້ວນເຈັດນັ້ນໃຫ້ເອົາບາດ ໗ ໜ່ວຍ ໃສ່ນ້ຳມົນແລ້ວໃຫ້ພຣະສົງສູດອ້ອມບ້ານຫວ່ານແຫ່ຊາຍໄປນຳ ພ້ອມກັບສວາດນ້ຳມົນ ແລະໃຫ້ຂຽນຄາຖາພຣະເຈົ້າ ໕ ພຣະອົງຕິດ ຫລື ແຂວນໄວ້ປະຕູບ້ານ ວ່າດັ່ງນີ້ ອະ ອຸ ເອ ວນະ ວະ ວະ ນະນະ ມະອະອຸ ນະໂມ ພຸດທາຍະ ໃຫ້ຮັກສາໄວ້ແຕ່ ໓ ວັນ ໗ ວັນ ຄືວ່າ ໃນບໍ່ໃຫ້ອອກ ນອກບໍ່ໃຫ້ເຂົ້າ ໗ ນັ້ນ ຄືໃຫ້ຊີ້ຊາຍສິ່ງຂອງນຳກັນທິ້ງນອກບ້ານນອກເຮືອນແຫ່ງຕົນ,

໖ – ເຖິງເດືອນ ໖ ໃຫ້ທຳພຸດທາພິເສກ ຫົດສົງພຣະພຸທຮູບເຈົ້າ ແລ້ວເຊີນພຣະພຸທຮູບເຈົ້າຂຶ້ນເທິ່ນບັນລັງຕາມເດີມ, ຫລືທຳບຸນ ບວດຮົດ ແລະ ບຸນວິສາຂະບູຊາ,

໗ – ເຖິງເດືອນ ໗ ໃຫ້ນິມົນພຣະສັງຄະເຈົ້າເຂົ້າວັດສາ ແລ້ວປ່າວເຕີນຍາດພີ່

ນ້ອງເອົາເບັ້ງນາຄົຫຼບເຫລັ້ມໃຫຍ່ ຖວາຍແກ່ສັງຄະເຈົ້າ ແລະຖວາຍເຂົ້ານ້ຳໂພຊນາອາຫານຟັງທັມມະເທສນາຕາມສັດທາ,

໙ – ເຖິງເດືອນ ໙ ດັບ ໃຫ້ເຮັດບຸນ ເຂົ້າປະດັບດິນ ນິມົນພຣະສັງຄະເຈົ້າສູດໄຊ ບະມຸງຄຸນ ຮຸ່ງເຊົ້າຈຶ່ງເອົາເຂົ້າປະດັບດິນໄປຢາຍໄວ້ຕາມດິນຕາມຫຍ້າ ອຸດທິສຝາກໄປຫາຍາດີພີ່ນ້ອງແລະເປດຜີທັງຫລາຍ ແລະຖວາຍທານແກ່ສັງຄະເຈົ້າ,

໑໐ – ເຖິງຣະດູເດືອນ ໑໐ ເພັງ ໃຫ້ທຳບຸນເຂົ້າສາກ ຝາກໄປຫາຍາດີພີ່ນ້ອງ ແລະເທວະດາອາຮັກທັງຫລາຍ,

໑໑ – ເຖິງເດືອນ ໑໑ ເພັງ ນານັ້ນ ໃຫ້ນິມົນພຣະສັງຄະເຈົ້າອອກວັດສາແລະທຳການບະສິພຣະພິກຂຸສາມະເນນ ຖວາຍເຂົ້ານ້ຳໂພຊນາອາຫານແລະຜ້າຈຳນຳວັດສາແກ່ພຣະສົງແລ້ວນິມົນທ່ານໃຫ້ຢູ່ຕໍ່ໄປ ເພື່ອຈຳວັດສາໃນປີໜ້າ,

໑໒ – ຕັ້ງແຕ່ ເດືອນ ໑໑ ແຮມຄ່ຳ ໑ ໄປເຖິງເດືອນ ໑໒ ເພັງ ໃຫ້ພ້ອມກັນທຳບຸນກະຖິນ ຖວາຍອັດຖະບໍຣິກຂານແກ່ພຣະສັງຄະເຈົ້າ ຯ

---

## ຄອງ ໑໔

ສິກຂາບົດຂອງຄະຣາວາດ: ຄອງ ໑໔ ນັ້ນແມ່ນຄອງຄະຣາວາດທີ່ຈະຕ້ອງປະພຶດປະຕິບັດ ໃນຣະວ່າງຄອບຄົວພົວເນັ່ງເຮືອນຊານຊາວບ້ານແລະວັດວາສາສນາ ມີຢູ່ ໑໔ ຂໍ້ ຄື :

໑ – ເມື່ອພືຊະໂພດເຂົ້າກ້າໝາກໄມ້ ເປັນຮວງເປັນໝາກມາແລ້ວ ຕົນຢ່າຟ້າວກິນກ່ອນ ໃຫ້ເອົາທຳບຸນໃຫ້ທານແກ່ທ່ານຜູ້ມີສິນກິນກ່ອນແລ້ວຕົນຈຶ່ງກິນເມື່ອພາຍລຸນ,

໒ – ຢ່າໂລບລ່າຍຕາຊັ່ງຕາຍອຍ ຢ່າຈ່າຍເງິນແດງແປງເງິນຄວ້າງ ແລະຢ່າກ່າວຄຳຫຍາບຊ້າກ້າແຂງຕໍ່ກັນ,

໓ – ໃຫ້ພ້ອມກັນເຮັດຮົ້ວຕ້າຍແລະກຳແພງລ້ອມວັດວາອາຣາມ ແລະ ບ້ານເຮືອນແຫ່ງຕົນແລ້ວປູກຫໍບູຊາເທວະດາໄວ້ໃນ ໔ ແຈບ້ານແລະເຮືອນ,

໔ – ເມື່ອຈັກຂຶ້ນເຮືອນນັ້ນ ໃຫ້ລ້ວຍລ້າງຕີນເສັຽກ່ອນແລ້ວຈຶ່ງຂຶ້ນ,

໕ – ເມື່ອເຖິງ ວັນສິນ ໗–໘–໑໔–໑໕ ຄ່ຳ ໃຫ້ສົມມາກ້ອນເສົ້າ ແມ່ກີໄຟ ແລະແມ່ຂັ້ນໄດ ປັກຕູ ທີ່ຕົນໄດ້ອາໄສທຸກຄ່ຳເຊົ້າວັນຄືນ,

໖ – ເມື່ອຈັກເຂົ້ານອນນັ້ນ ໃຫ້ເອົານ້ຳລ້ວຍລ້າງຕີນຕົວກ່ອນ ແລ້ວຈຶ່ງນອນ,

໗ – ເຖິງວັນສິນ ໃຫ້ເອົາດອກໄມ້ທູບທຽນສົມມາບົວແຫ່ງຕົນ ແລະພໍ່ແມ່ເຖົ້າແກ່ລຸງດາຂອງຕົນແລະເຖິງວັນອຸໂປສົດ ໃຫ້ແຕ່ງຂັນດອກໄມ້ທູບທຽນໄປເຄບສັງຄະເຈົ້າ,

໘ – ເຖິງວັນສິນດັບສິນເພັງມານັ້ນ ໃຫ້ນິມົນພຣະສັງຄະເຈົ້າມາສູດມຸງຄຸນເຮືອນ ແລ້ວທຳບຸນໃສ່ບາດຖວາຍທານ,

໙ – ເມື່ອພິກຂຸມາບິນທະບາດນັ້ນ ຢ່າໃຫ້ເພິ່ນຄອຍຖ້າ ເວລາໃສ່ບາດກໍຢ່າໃຫ້ຊູນບາດຊູນພິກຂຸສາມະເນນ ແລະຍາມໃສ່ບາດນັ້ນກໍຢ່າໄດ້ໃສ່ເກີບ ກັ້ງຮົ່ມ ເອົາຜ້າປົກຫົວ ອຸ້ມຫລານ ຫຼື ເຄື່ອງສັດຕາອາວຸດ,

໑໐ – ເມື່ອພິກຂຸເຂົ້າ ປະຣິວາສະກັມ ຊຳຣະເນື້ອຕົນນັ້ນ ໃຫ້ມີຂັນດອກໄມ້ທູບທຽນ ແລະ ເຄື່ອງອັດຖະປະຣິກຂານໄປຖວາຍທ່ານ.

໑໑ – ເມື່ອເຫັນພິກຂຸສັງຄະເຈົ້າກາຍມາໃຫ້ນັ່ງລົງບໍ່ມີໄຫວ້ກ່ອນແລ້ວຈຶ່ງຄ່ອຍຈາຣະຈາ.

໑໒ – ຢ່າປຽບຢ່ຳເງົາເຈົ້າພິກຂຸສາມະເນນຕົນມີສິນບໍຣິສຸດ.

໑໓ – ຢ່າເອົາອາຫານເງື່ອນອັນຕົນກິນແລ້ວ ໄປທານໃຫ້ແກ່ສັງຄະເຈົ້າ ແລະ ເອົາໄວ້ຖ້າໃຫ້ຜົວກິນ.

໑໔ – ຢ່າເສບກາມະຄຸນ ໃນວັນສິນ, ວັນເຂົ້າວັດສາ, ອອກວັດສາແລະວັນມະຫາສົງການ.

## ກອງ ໑໔ (ພຣະຣາຊທັມນູນ ຂອງ ພຣະມະຫາກະສັດ)

໑ – ເປັນຫົວພຍາ ຈັກຕັ້ງແຕ່ງແປງຊີ້ຊານບານກອນເສນາອາມາດຣາຊມຸນຕີ ໃຫ້ພິຈາຣະນາສືບຫາ ຜູ້ຊື່ ຜູ້ຄົດ ຜູ້ຮ້າຍ ຜູ້ດີ ຜູ້ຊ່າງແຖລງແປງລົ້ນມັກສັບສໍ່ຖ້ອຍຄຳອັນໜັກ ອັນເບົາ ອັນນ້ອຍ ອັນໃຫຍ່ ໃຫ້ໄວ້ໃນໃຈຫັ້ນກ່ອນ ສົມທີ່ຟັງຈຶ່ງຟັງ ບໍ່ສົມທີ່ຟັງຢ່າຟັງ ສົມຕັ້ງຊີ້ໃຫ້ພຽງໃດຈຶ່ງຕັ້ງພຽງນັ້ນ ໃຫ້ແຕ່ງຕັ້ງຜູ້ຊື່ສັດສຸຈຣິດໝັ້ນທ່ຽງ ຜູ້ຮູ້ຈັກຣາຊການບ້ານເມືອງມາແຕ່ກ່ອນ ບໍ່ຂົ່ມເຫງໄພ່ຟ້າຂ້າແຜ່ນດິນໃຫ້ຫາຍໃຈເຂົ້າອອກໄດ້ ຈຶ່ງຕັ້ງໃຫ້ເປັນເສນາອາມາດ,

໒ – ເປັນຫົວພຍາ ໃຫ້ເສນາມຸນຕີເປັນສາມັກຄີພ້ອມພຽງກັນ ໃຫ້ໝັ່ນມາປະຊຸມກັນບໍ່ໃຫ້ຂາດ, ອັນໜຶ່ງ ສິ່ງໃດຈັກໃຫ້ອານັດຂ້າເສິກເກງຂາມ ແລະໃຫ້ເຂົ້າຢູ່ໃນເງື້ອມມືແຫ່ງເຈົ້າຕົນດ້ວຍບຸນກັມປັນຍາ ໃຫ້ບ້ານເມືອງກ້ານກຸ່ງຮຸ່ງເຮືອງເປັນທີ່ກວ້າງຂວາງ ໃຫ້ໄພ່ຟ້າຂ້າແຜ່ນດິນຢູ່ເປັນເປັນສຸກ ຢ່າກົດຂີ່ຂົ່ມເຫງເຫັນ.

໓ – ເປັນຫົວພຍາ ເຖິງສັງຂານປີໃໝ່ ຖ່າຍສັງກາດມາລະເກນ ໃຫ້ເຊີນພຣະແກ້ວ ພຣະບາງ ພຣະພຸທຮູບ ສົງນ້ຳອົບນ້ຳຫອມໄວ້ໃຫ້ສະພັງ ສັກກາຣະດ້ວຍດອກໄມ້ທູບທຽນ ຟັງທັມຈຳສິນຄົບງັນ ໗ ວັນ ທຸກ ໆ ວັດ ໃຫ້ເປັນການຊົມຊື່ນຍິນດີເຊີ່ງພຣະສາສນາ ຕົນພຣະເຈົ້າຊາຍ ບູຊາເທພະດາທັງຫລາຍທາງນ້ຳແລະທາງບົກ ບ້ານເມືອງຈຶ່ງ

ວຸດທີ່ຊຸ່ມເຢັນ ນ້ຳຟ້າລາຍຝົນເຂົ້າໄຮ່ເຂົ້ານາບໍລິບູນ.

໔ – ເປັນຫ້າວພະຍາ ວັນສັງຂານພັກ ໃຫ້ນິມົນພິກຂຸສົງແຫ່ນ້ຳ ຝ່າຍໃຕ້ເມືອຝ່າຍເໜືອ ວັນສັງຂານພັກໃຫ້ວັດຝ່າຍເໜືອມາຝ່າຍໃຕ້ ເທວະດາຫລວງໄປປານຫົວເມືອງທ້າຍເມືອງທຸກໆ ຣະດູປີ ບ້ານເມືອງຈຶ່ງວຸດທີຈຳເຣີນ ໃຫ້ຣາສດອນມີນ້ຳອົບນ້ຳຫອມຣົດສົງພຣະພິກຂຸສົງ ບ້ານເມືອງຈຶ່ງຢູ່ເປັນເປັນສຸກ ໃຫ້ຣາສດອນແຕ່ງໝໍ້ອຸບົງ ເຄບພິກຂຸສົງ ເພື່ອກັ້ງບັງໄພຍໄພອັນຕຣາຍແກ່ຣາສດອນທົ່ວໄປເທີ້ນ.

໕ – ເປັນຫ້າວພະຍາ ວັນສັງຂານປີໃໝ່ໃຫ້ເສນາອາມາດຣາຊມຸນຕີພະຍາເພັ້ຍທ້າວຂຸນຫົວບ້ານຫົວເມືອງຕຳຣວດອາລາມະຫາດເລັກສີພາຍໃນແຈກ ນິຫຼຽນຄົນຖຸ້ພ້ອມກັນຂົນທູນເກົ້າທູນກະໝ່ອມຖວາຍພຣະຣາຊະສີ ເພັ້ຍກະຊັກນຸງຄຸບຖວາຍພອນໝາກໝັ້ນບົ້ນ ປຸໂຣຫິຕະອາຈານຖວາຍພອນໃຫ້ມີອາຍຸ ວັນໂນ ສຸຂັງ ພະລັງ ແກ່ອົງພຣະມະຫາເຈົ້າຊີວິດ ແລ້ວຈຶ່ງເຊີນເອົານ້ຳມະຫາພຸດທາພິເສກ ອັນພຣະອັດສີໄປສະຖາປະນາໄວ້ໃນຖ້ຳນົກແອ່ນຖ້ຳນາງອັ້ນ ອັນຊື່ວ່ານ້ຳທຸ້ງງນັ້ນ ແຫ່ມາສົງພຣະພຸທຮູບວັດຫລວງໃນເມືອງທຸກວັດ ແລ້ວໄປສົງພຣະພຸທຮູບວັດສີສວັນເທວະໂລກ ແລ້ວເມື່ອສົງ ພຣະພຸທຮູບຖ້ຳຕິງທວາຣາ ທີ່ປາກນ້ຳອູປະຕູເມືອງຝ່າຍເໜືອ ແລ້ວຈຶ່ງນິມົນພຣະພິກຂຸສົງນຳບາລີພຣະພຸທຮູບໃນພຣະຣາຊວັງຕາມທຳນຽມ ຈຶ່ງເປັນການໂດຍບຳເພັງພຣະສັງຄະເຈົ້າຖືກຕ້ອງຕາມພຣະອັດຖະກະຖາຈານກ່າວໄວ້ຫັ້ນແລ.

໖ – ເປັນຫ້າວພະຍາ ໃນວັນສັງຂານເປັນວັນສົ່ງຣະດູປີເກົ່າ ປີໃໝ່ຈັກມາເຖິງໃຫ້ເຈົ້ານາຍເສນາຂ້າຣາຊການມູນຕີຜູ້ມີນາມບັດ ແລະ ທ້າວເພັ້ຍຫົວຫລົງຫົວພັນຫົວບ້ານຫົວເມືອງສິບຮ້ອຍນ້ອຍໃຫຍ່ ເຊິ່ງເປັນຂ້າຂອບຂັນທະສີມາທຸກດ້ານນີ້ ພ້ອມກັນເຂົ້າມາຖືນ້ຳພຣະພິພັດສັດຍາບູສັດ ຕໍ່ພຣະພັກພຣະພຸທະເຈົ້າພຣະທັມມະເຈົ້າພຣະສັງຄະເຈົ້າໃຫ້ເປັນການຊື່ສັດຕໍ່ແຜ່ນດິນ ປ້ອງກັນເພື່ອບໍ່ໃຫ້ຄິດກະບົດຄິດຮ້າຍຕໍ່ແຜ່ນດິນ.

໗ – ເປັນຫ້າວພະຍາ ຄັນເຖິງເດືອນ ໗ ໃຫ້ລ້ຽງເທພາອາຣັກມະເຫສັກຫລັກເມືອງຫູເມືອງ ຕາເມືອງ ເສື້ອເມືອງ ຊົງເມືອງ ຕາມຄອງສິບສີ່ແລ້ວ ໃຫ້ເຊີນເທພາອາຣັກມະເຫສັກເຂົ້າມາຊຳຣະບ້ານເມືອງປ້ອງກັນອັນຕຣາຍ ຕາມບູຮານຣາຊປະເພນີ ສັ່ງໄວ້ວ່າເມືອງຊວາບໍ່ມີທັມເປັນທີ່ກຸ້ມຄອງໄດ້ ເອົາໄສຍະສາດ ຄືຜີເມືອງກຸ້ມຄອງ ຈຶ່ງມີຣົດອັນນີ້ສືບມາ ເພື່ອບໍ່ໃຫ້ເກີດອັນຕຣາຍໄພຍໄພດ້ວຍຜີສາງຄາງແດງ.

໘ – ເປັນຫ້າວພະຍາ ເຖິງເດືອນ ໘ ໃຫ້ສູດຊຳຣະເມືອງ ສືບຊາດາເມືອງ ບູຊາເທວະດາອາຣັກທັງ ໘ ທິສາ ບູຊາພຣະຣັດສອງພີ່ນ້ອງ ພະຍາບາກ ໑໕ ກະກູນ ສູດເຖິງ ໓ ວັນ ໗ ວັນ ແລ້ວໃຫ້ສູດຮອບເມືອງ ບົງປືນ ຫວ່ານຫີນແຫ່ແລະຊາຍ ເພື່ອໃຫ້ຫາຍ

ພຍາທິໂຣຄາໄພຍໄພອັນຕລາຍ ໃຫ້ຢູ່ເຢັນເປັນສຸກແກ່ບ້ານເມືອງທຸກປະການ.

໙ – ເປັນຫ້າວພຍາ ຄັນເຖິງເດືອນ ໙ ດັບ ໃຫ້ປ່າວເຕີນຣາສດອນບ້ານເມືອງ ທານຫໍ່ເຂົ້າປະດັບດິນ ໄປຫາປູ່ຍ່າຕາຍາຍລູກເຕົ້າຫລານເຫລັນ ອັນເຖິງແກ່ອະນິຈກັມ ໄປສູ່ປະຣະໂລກທົ່ວທຸກແຫ່ງ ແລ້ວໃຫ້ເຈົ້ານາຍເສນາຂ້າຣາຊການ ຫົວບ້ານຫົວເມືອງ ສິບຮ້ອຍນ້ອຍໃຫຍ່ ລົງມາຖືນ້ຳພຣະພິພັດຖວາຍສັດຍາບຸສັກອີກເທື່ອໜຶ່ງ ແລ້ວຊ່ວງເຮືອ ສລອງອຸສຸພະນາກປາກດົງ ແລະ ປາກຄານ ກັບພຍານາກ ໑໕ ກະກຸນ ອັນຮັກສາບ້ານເມືອງໃຫ້ຊຸ່ມຊື່ນຍິນດີ ບ້ານເມືອງຈຶ່ງຢູ່ເຢັນເປັນສຸກ ເຂົ້າກ້າໄຮ່ນາບໍລິບູນ.

໑໐ – ເປັນຫ້າວພຍາ ຄັນເຖິງເດືອນ ໑໐ ເພັງ ໃຫ້ປ່າວຣາສດອນໃຫ້ທານເຂົ້າສລາກະພັດ ຢາດນ້ຳອຸທິດໄປຫາເທວະດາອາຣັກຫລັກເມືອງ ອັນຮັກສາພຣະພຸທສາສນາທັງພໍ່ແມ່ເຜົ່າພົງວົງສາແຫ່ງຕົນເທີ້ນ ຈຶ່ງຈັກຄ້ຳຄູນຮຸ່ງເຮືອງແລ.

໑໑ – ເປັນຫ້າວພຍາ ເຖິງຣະດູເດືອນ ໑໑ ເພັງ ໃຫ້ສລອງພຸດທາພິເສກພຣະທາດຈອມສີ ທຸກ ໆ ປີປ່າຂາດ ດ້ວຍເປັນສີບ້ານສີເມືອງ ແລ້ວໃຫ້ໄຫວ້ພິກຂຸສັງຄະເຈົ້າມາຂອດສິມໃນສນາມ ໃຫ້ສັງຄະເຈົ້າປະວາຣະນາໃນທີ່ນັ້ນ ຄັນແລ້ວກິຈສົງໃຫ້ສູດຖອດສິມບັ້ງເສັງ ບ້ານເມືອງຈຶ່ງຢູ່ວຸດທິຈຳເຣີນ ເສນາອາມາດຈຶ່ງຈັກເປັນສາມັກຄີ ພ້ອມພຽງກັນຈັດອາຊການບ້ານເມືອງຈຶ່ງບໍ່ຂັດຂ້ອງແກ່ກັນແລະກັນ, ຄັນເຖິງແຮມຄ່ຳໜຶ່ງ ໃຫ້ປ່າວເຕີນຣາສດອນໃຫ້ໄຫລເຮືອໄຟບູຊາພຍານາກສິບຫ້າກະກຸນ ບ້ານເມືອງຈຶ່ງຢູ່ສຸຂເສີມເຕີມຄອງ.

໑໒ – ເປັນຫ້າວພຍາ ຄັນເຖິງເດືອນ ໑໒ ຂຶ້ນຄ່ຳໜຶ່ງ ໃຫ້ເຕີນຫົວບ້ານຫົວເມືອງ ສິບຮ້ອຍນ້ອຍໃຫຍ່ໃນຂອບຂັນທະສີມາ ເຂົ້າມາເຕົ້າໂຮມນະຄອນຫລວງພຣະບາງ ເປັນຕົ້ນວ່າ ຂ້າ ລາວ ຊາວດອຍ ເພື່ອແຫ່ພຣະບາດສົມເດັດພຣະເຈົ້າມະຫາຊີວິດໄປລົງຊ່ວງເຮືອ ແລະນະມັສການພຣະທາດສຣີທັມມາໂສກະຣາດ. ເດືອນ ໑໒ ຂຶ້ນ ໓ ຄ່ຳ ຖືນ້ຳ, ຂຶ້ນ ໑໓ ຄ່ຳ ຊ່ວງເຮືອສລອງອຸສຸພະນາກ, ວັດຫລວງ ໃຫ້ເພັງວັດມີເຮືອວັດລະລຳ, ອັກຄະມະຫາເສນາບໍດີ ຕັ້ງແຕ່ເມືອງແສນ ເມືອງຈັນ ລົງໄປເຖິງສິບຣະດູກ ວຽງແກ ນາໄດ້ ນາເໜືອ ໃຫ້ຕັ້ງເປັນຜ່າມທຸກຕຳແໜ່ງ ເປັນເທສການບຸນຊ່ວງເຮືອສລອງພຍານາກ ໑໕ ກະກຸນ ແລະອາຣັກຫລັກເມືອງເທພະດາທາງນ້ຳທາງບົກ ເດືອນ ໑໒ ເພັງ ເສນາອາມາດແລະສັງຄະເຈົ້າພ້ອມຣາສດອນ ແຫ່ພຣະເຈົ້າມະຫາຊີວິດແລະເຈົ້າບ່າຂມ່ອມທັງ ໕ ໄປນະມັສການພຣະທາດສຣີທັມມາໂສກະຣາດ ພ້ອມທັງເຄື່ອງບູຊາ ມີຕົ້ນຫຽນດອກໄມ້, ບັ້ງໄຟດອກ, ໄຟທາງ, ກະທຸບປ່ວຍ, ກ້ອງປີດກ້ອງດາວ, ຮູບຫຸ່ນ ລະຄອນ ສິງໂຂນແລະເຄື່ອງຫລິ້ນມະໂຫລສົບຕ່າງ ໆ ໄປຫລິ້ນຢູ່ພະລານເດີ່ນພຣະທາດດ້ວຍ ມີວັນ ມີຄືນ ແລ້ວຈຶ່ງສເດັດກັບຄືນ ເພື່ອໃຫ້ເປັນທີ່ຊຸ່ມຊື່ນຍິນດີເຊິ່ງກັນແລະກັນ, ຂ້າ ລາວ ຊາວດອຍທັງ

ຫລາຍ ກໍຈັກໄດ້ເຫັນກັນແລະກັນ ແລະຈັກໄດ້ເວົ້າໂລມກັນເປັນມິດສະຫາຍ ຈິ່ງຈັກເປັນກຸດສົນກິດຕິຊາປາກົດແກ່ບ້ານນ້ອຍເມືອງໃຫຍ່ອັນຢູ່ໃກ້ຄຽງນັ້ນຊະແລ.

໑໓ – ເປັນທ້າວພຍາ ໃຫ້ແຕ່ງແປງການທານທຸກຢ່າງ ເປັນຕົ້ນວ່າ ກວດນ້ຳ ກະຖິນ ແລະບວດພຣະ ຣົດເຈົ້າ ດັ່ງນາໂລໄຂມະຫາຊາດ ອັກຂາລີນ ໔ ລີນ ໘ ເປັນຈີ ການທຸກວັນອຸໂປສົດ ແລະມີຫົວໃຈອັນເຕັມໄປດ້ວຍ ພົມມະວິຫານ ໔ ຄື ເມດຕາ ກະຣຸນາ ມຸທິຕາ ອຸເປກຂາ ເພື່ອແບ່ງແກ່ເສນາອາມາດຣາສດອນຂ້າໄປ່ໃນຂອບຂັນທະສີມາຢ່ານີ້ ໃຈອັນກະດ້າງໄປດ້ວຍພານເປັນຕົ້ນວ່າ ໄລ່ເນື້ອ ທຸ່ງຕາຫລົບລາວ ເອົາລູກສະກຸນມາເປັນເມັ້ງ ຈິ່ງລ້ຽງພົກປາກ ອາດໃຫ້ແລ້ວຍັງດີຈການ ມາໄວ້ ແລະໃຫ້ມີເສນາອາມາດຜູ້ສລາດກ້າຫານ ກັບທັງສະມະນະຊີພາມດຳນິລົນບໍລິສຸດແລະຄວາມຮູ້ ແລະປະກອບດ້ວຍອາຊຸເທີນ ໑໐ ປະການ ບ້ານເມືອງຈຶ່ງວຸທິຈຳເຣີນແລ.

໑໔ – ເປັນທ້າວພຍາ ໃຫ້ມີສິບບໍ່ດີອັນປະເສີດ ໑໔ ປະການ ຄື ຫູເມືອງ ຕາເມືອງ, ແກ່ນເມືອງ, ປະຕູເມືອງ, ຮາກເມືອງ, ເຫງົ້າເມືອງ, ຂື່ເມືອງ, ຜາເມືອງ, ເຂດເມືອງ, ແປເມືອງ, ສະດືເມືອງ, ໃຈເມືອງ, ຄ້ຳເມືອງ, ເມກເມືອງ ໆ

໑ – ຫູເມືອງ ໄດ້ແກ່ອາຊຸທູດຜູ້ສລາດອາດນຳຄຳເຂົ້າອອກຕ່າງປະເທດ.

໒ – ຕາເມືອງ ໄດ້ແກ່ນາຍໜັງສືຜູ້ສລາດ ອາດສອນອັກຂຣະບາລີ.

໓ – ແກ່ນເມືອງ ໄດ້ແກ່ສົງກະເຈົ້າຜູ້ສລາດຮູ້ພຣະທັມມະວິໄນ.

໔ – ປະຕູເມືອງ ໄດ້ແກ່ເຄື່ອງສັດຕາອາວຸດຕ່າງ ໆ ສ້າງສົມໄວ້.

໕ – ຮາກເມືອງ ໄດ້ແກ່ໂຫຣາສາດອາດຮູ້ເຫດຮ້າຍແລະດີ.

໖ – ເຫງົ້າເມືອງ ໄດ້ແກ່ເສນາຜູ້ເຖົ້າຜູ້ແກ່ ກ້າຫານໝັ້ນຄົງ.

໗ – ຂື່ເມືອງ ໄດ້ແກ່ກວານບ້ານແລະຕາແສງອາສດອນຜູ້ຊື່ສັດ.

໘ – ຜາເມືອງ ໄດ້ແກ່ທະຫານຜູ້ຮານກາດ ອາດທຳບຸນທະການເອົາໄຊຊະນະຂ້າເສິກໄດ້.

໙ – ແປເມືອງ ໄດ້ແກ່ທ້າວພຍາຜູ້ປະກອບດ້ວຍສີລທັມອັນດີ.

໑໐ – ເຂດເມືອງ ໄດ້ແກ່ເສນາອາມາດຜູ້ສລາດຮູ້ເຂດບ້ານເຂດເມືອງວ່າ ທີ່ນັ້ນດີຊົ່ວ.

໑໑ – ສະດືເມືອງ ໄດ້ແກ່ເສດຖີພໍ່ຄ້າຜູ້ຮຽນເປັນດີ.

໑໒ – ໃຈເມືອງ ໄດ້ແກ່ໝໍປາຜູ້ວິເສດ ຮູ້ພຍາດທີ່ໃສ່ປາກຸກ.

໑໓ – ຄ້ຳເມືອງ ໄດ້ແກ່ພາກພົ້ນພົນປະເທດແລະພົລເມືອງດີ.

໑໔ – ເມກເມືອງ ໄດ້ແກ່ພາສີອາກອນທັງຫລາຍໃນເຂດບ້ານເມືອງ ໆ

Imp. Somj Silpa